ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຍທຂ
PWT

ກະຊວງໂຍທາທິການ ແລະ ຂົນສົ່ງ

ກົມຂົນສົ່ງ

ເລກທີ: 31039 /ຍທຂ.ກຂສ

ນະຄອນຫຼວງວຽງຈັນ, ວັນທີ: 25 ພະຈິກ 2019

# ໜັງສືເຊີນຮ່ວມປະມູນ

ເຖິງ: ບັນດາບໍລິສັດທີ່ປຶກສາ ຫຼື ນິຕິບຸກຄົນ ທີ່ມີຄວາມສົນໃຈ

ເລື່ອງ: ເຊີນເຂົ້າຮ່ວມປະມູນຄັດເລືອກເອົາບໍລິສັດ ເພື່ອສຶກສາຄວາມເປັນໄປໄດ້ໂຄງການສ້າງສູນທົດສອບຜະລິດຕະພັນຍານພາຫະນະໃນ ສປປ ລາວ ພາຍໃຕ້ກອງທຶນຮ່ວມມືພິເສດແມ່ນ້ຳຂອງ-ແມ່ນ້ຳລ້ານຊ້າງ "Feasibility Study on Development Automotive of Product Testing Center in Lao PDR"

- ອີງຕາມຂໍ້ຕົກລົງຂອງລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ກົມຂົນສົ່ງ ສະບັບເລກທີ 15862/ຍທຂ, ລົງວັນທີ 18 ກໍລະກົດ 2018.
- ອີງຕາມຂໍ້ຕົກລົງຂອງລັດຖະມົນຕີ ກະຊວງໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ: 2822/ຍທຂ, ລົງວັນທີ 8 ກຸມພາ 2019.

ກົມຂົນສົ່ງ ກະຊວງໂຍທາທການ ແລະ ຂົນສົ່ງ ຂໍຖືເປັນກຽດແຈ້ງມາຍັງບັນດາ ບໍລິສັດທີ່ປຶກສາພາຍໃນ ແລະ ຕ່າງປະເທດຊາບວ່າ ປັດຈຸບັນ ກົມຂົນສົ່ງ ໄດ້ຮັບທຶນ ຊ່ວຍເຫຼືອຈາກ ລັດຖະບານ ແຫ່ງ ສປ. ຈີນ ພາຍໃຕ້ກອງທຶນພິເສດແມ່ນ້ຳຂອງ-ແມ່ນ້ຳລ້ານຊ້າງ Mekong-Lancang Cooperation Special Fund" ເພື່ອສຶກສາຄວາມເປັນໄປໄດ້ໂຄງການສ້າງສູນທົດສອບຜະລິດຕະພັນຍານພາຫະນະ ໃນ ສປປ ລາວ "Feasibility Study on Development of Automotive Product Testing Center in Lao PDR". ເພື່ອຈັດຕັ້ງປະຕິບັດໃຫ້ທັນເວລາທີ່ກໍານົດໄວ້. ກົມຂົນສົ່ງ ຈຶ່ງຂໍເຊີນ ບັນດາບໍລິສັດທີ່ປຶກສາ ພາຍໃນ ແລະ ຕ່າງປະເທດ ທີ່ມີຄວາມສົນເຂົ້າຮ່ວມປະມູນໂຄງການດັ່ງກ່າວ. ຊຶ່ງກົມຂົນສົ່ງຈະໄດ້ເລີ່ມສະໜອງຊອງປະມູນໃນຄັ້ງວັນທີ 6 ທັນວາ 2019. ລາຍລະອຽດໃນການກໍານົດມາດຖານເງື່ອນໄຂ ແລະ ໜ້າວຽກຕ່າງໆໃນການຈັດຕັ້ງປະຕິບັດຈະລະບຸໄວ້ໃນຊອງປະມູນ.

<u>**ໝາຍເຫດ:**</u>

1. ການເປີດຊອງປະມູນຈະໄດ້ຈັດຂຶ້ນ 2 ຄັ້ງ ຄື:
   <u>ຄັ້ງທີ 1</u>: ໃນວັນທີ 18 ທັນວາ 2019 ເວລາ 9:00 ໂມງ ທີ່ຫ້ອງປະຊຸມ ກົມຂົນສົ່ງ ກະຊວງ ຍທຂ ແມ່ນເປີດຊອງປະມູນຄັດເລືອກເງື່ອນໄຂດ້ານ ຄຸນນະວຸດທິຂອງບໍລິສັດ ແລະ ພະນັກງານສໍາຄັນ
   <u>ຄັ້ງທີ 2</u>: ໃນວັນທີ 20 ທັນວາ 2019 ເວລາ 9:00 ໂມງ ແມ່ນເປີດຊອງປະມູນຄັດເລືອກດ້ານການສະເໜີລາຄາ
2. ການຍື່ນເອກະສານປະມູນຕ້ອງນໍາສົ່ງໃຫ້ຄະນະກໍາມະການກ່ອນວັນທີ 13 ທັນວາ 2019 ເວລາ 16:00 ໂມງ. ກໍລະນີນໍາສົ່ງເອກະສານປະມູນຊ້າຖືວ່າສະລະສິດ.

ຫົວໜ້າກົມ

ກະຊວງໂຍທາທິການ ແລະ ຂົນສົ່ງ
ກົມຂົນສົ່ງ

ວິໄລພັນ ໄຊຍະວົງ

ຕິດຕໍ່ພົວພັນ: ພະແນກ ຄຸ້ມຄອງພາຫະນະ ແລະ ກົນຈັກ, ກົມຂົນສົ່ງ 021-412270,